ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=======000=======

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ

......1090......

...ທີ..2 3 OCT 2015

...ລະສັບ 021 217770

ເລກທີ 707/ທຫກ

ນະຄອນຫຼວງວຽງຈັນ, ວັນທີ 2 3 OCT 2015

# ແຈ້ງການ

ເຖິງ: ບັນດາກົມ, ທຽບເທົ່າ, ພະນັກງານ ທະນາຄານແຫ່ງ ສປປ ລາວ ທີ່ນັບຖື.

ເລື່ອງ: ການປ້ອງກັນພາຍໃນ ທະນາຄານແຫ່ງ ສປປ ລາວ.

- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບວຽກງານປ້ອງກັນພາຍໃນ ທຫລ ເລກທີ 58/ທຫກ ວັນທີ 23 ຕຸລາ 2015.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາກົມ, ທຽບເທົ່າ ແລະ ພະນັກງານຊາບທົ່ວເຖິງກັນວ່າ ເພື່ອຮັບປະກັນຄວາມປອດໄພຮອບດ້ານ, ຄວາມເປັນລະບຽບຮຽບຮ້ອຍໃນການເຂົ້າ-ອອກຂອງພະນັກງານ ແລະ ແຂກທີ່ມາພົວພັນວຽກຢູ່ພາຍໃນ ທຫລ ສະນັ້ນ, ຫ້ອງການຈຶ່ງແຈ້ງມາຍັງບັນດາກົມ ດັ່ງລຸ່ມນີ້:

1. ໃຫ້ພະນັກງານເຂົ້າ-ອອກໃຫ້ຖືກຕ້ອງຕາມປະຕູເຂົ້າ-ອອກ;
2. ເວລາເຂົ້າຜ່ານປະຕູເຂົ້າ-ອອກນັ້ນໃນບໍ່ໃຫ້ເອົາມື ຫຼື ວັດຖຸໄປບັງເຊັນເຊີ ຫຼື ກົດຄ້າງໄວ້ເພື່ອເຂົ້າຫຼາຍໆຄົນບາດດຽວ ອາດເຮັດໃຫ້ເຄື່ອງເປ່ເພອ່ານລະຫັດບໍ່ຖືກຕ້ອງ;
3. ຫ້າມພະນັກງານທີ່ບໍ່ມີສ່ວນກ່ຽວຂ້ອງເຂົ້າໄປຢູ່ປ້ອມຍາມຕຳຫຼວດ;
4. ບໍ່ໃຫ້ບຸກຄົນຂ້າມໄມ້ບາຣິແຍເດັດຂາດ ຖ້າມີຜູ້ຝ່າຝືນມອບໃຫ້ເຈົ້າໜ້າທີ່ເອັ້ນມາຕັກເຕືອນທັນທີ;
5. ບໍ່ໃຫ້ພະນັກງານເອົາເຄື່ອງ ຫຼື ວັດຖຸມີຄ່າໄປຝາກຢູ່ປ້ອມຍາມຕຳຫຼວດ;
6. ຫ້າມບໍ່ໃຫ້ພະນັກງານເອົາລົດມາຝາກຢູ່ໃນ ທຫລ ໄລຍະບຸນ ຊ່ວງເຮືອນັບແຕ່ວັນທີ 26-28 ຕຸລາ 2015 (ຍົກເວັ້ນຄະນະຜູ້ອຳນວຍການ ແລະ ຄະນະປ້ອງກັນ);
7. ສຳລັບບັດທີ່ຫ້ອງການປະກອບໃຫ້ແຕ່ລະຄົນ ຖ້າໃຊ້ບໍ່ໄດ້ໃຫ້ປະສານມາຍັງຫ້ອງການເພື່ອປັບປຸງຄືນ;
8. ກົມກອງໃດ, ພາກສ່ວນໃດຈະຈັດກອງປະຊຸມໂດຍການເຊີນບັນດາກະຊວງເຂົ້າຮ່ວມ ໃຫ້ສົມທົບເອົາຂໍ້ມູນທະບຽນລົດສົ່ງໃຫ້ຫ້ອງການ ເພື່ອຈະໄດ້ສົມທົບກັບເຈົ້າໜ້າທີ່ອຳນວຍຄວາມສະດວກໃຫ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ພາສີ ພິມມະກອນ